ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ອົງການປະກັນສັງຄົມແຫ່ງຊາດ

ເລກທີ 3185/ອປຊ

ນະຄອນຫຼວງວຽງຈັນ, ວັນທີ 16 SEP 2022

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ຂາເຂົ້າ ເລກທີ 3229
ວັນທີ 28.9.22

## ແຈ້ງການ

**ເຖິງ:** ບັນດາອົງການຈັດຕັ້ງພາກລັດ, ເອກະຊົນ, ອົງການຈັດຕັ້ງສາກົນ, ແລະ ຫົວໜ່ວຍແຮງງານ ຂອບເຂດທົ່ວປະເທດ;

**ເລື່ອງ:** ການຂຶ້ນທະບຽນປະກັນສັງຄົມ ຂອງ ຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ.

- ອີງຕາມ ກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ສະບັບເລກທີ 54/ສພ, ລົງວັນທີ 27 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການປະກັນສັງຄົມແຫ່ງຊາດ ສະບັບ ເລກທີ 0897/ຣສສ, ລົງວັນທີ 10/03/2022.
- ອີງຕາມ ຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດ ຢູ່ ສປປ ລາວ ສະບັບເລກທີ 02/ນຍ,ລົງວັນທີ 01/02/2018.

ເພື່ອເຮັດໃຫ້ ຂັ້ນຕອນການເລີ່ມຕົ້ນທຸລະກິດ ຢູ່ໃນ ສປປ ລາວ ສັ້ນກະທັດຮັດ, ສະດວກ, ວ່ອງໄວ, ງ່າຍດາຍ ໃຫ້ແກ່ຫົວໜ່ວຍແຮງງານ ກໍ່ຄືຜູ້ອອກແຮງງານ ໃນຂອບເຂດທົ່ວປະເທດ. ອົງການປະກັນສັງຄົມແຫ່ງຊາດ ຂໍແຈ້ງມາຍັງທ່ານເພື່ອຊາບ ກ່ຽວກັບ ຂັ້ນຕອນການຂຶ້ນທະບຽນປະກັນສັງຄົມຂອງຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ ດັ່ງນີ້:

1. ການຂຶ້ນທະບຽນປະກັນສັງຄົມໃຫ້ຫົວໜ່ວຍແຮງງານ ແມ່ນບໍ່ໄດ້ລວມຢູ່ໃນຂັ້ນຕອນການເລີ່ມຕົ້ນທຸລະກິດ ເພາະຂັ້ນຕອນດັ່ງກ່າວຕາມນິຕິກຳ ແລະ ຕາມການຈັດຕັ້ງປະຕິບັດຕົວຈິງ ແມ່ນດຳເນີນພາຍຫລັງທີ່ໄດ້ສາເລັດການຂຶ້ນທະບຽນວິສາຫະກິດແລ້ວ;
2. ຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ ຕ້ອງໄດ້ມາແຈ້ງຂຶ້ນທະບຽນນຳອົງການປະກັນສັງຄົມແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງໃນເວລາທີ່ໄດ້ເລີ່ມດຳເນີນ ຫລື ເຄື່ອນໄຫວທຸລະກິດ ແລະ ເລີ່ມມີຜູ້ອອກແຮງງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນນັບແຕ່ໜຶ່ງຄົນຂຶ້ນໄປ ຕາມກົດໝາຍແຮງງານ ແລະ ກົດໝາຍປະກັນສັງຄົມ ທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າອົງການ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ອົງການປະກັນສັງຄົມແຫ່ງຊາດ

ແກ້ວ ຈັນທະວິໄຊ